ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະປ່າໄມ້

1974

ເລກທີ.................../ກປ

ນະຄອນຫຼວງວຽງຈັນ, ວັນທີ 23 AUG 2012

# ຂໍ້ຕົກລົງ

## ຂອງລັດຖະມົນຕີ

## ວ່າດ້ວຍການຂຶ້ນທະບຽນພິມສັດ

- ອີງຕາມກົດໝາຍວ່າດ້ວຍການລ້ຽງສັດ ແລະການສັດຕະວະແພດ ເລກທີ 03/ສພຊ, ລົງວັນທີ 25 ກໍລະກົດ 2008;
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ເລກທີ 262/ນຍ, ລົງວັນທີ 28 ມິຖຸນາ 2012 ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງກະຊວງກະສິກຳ ແລະປ່າໄມ້;
- ອີງຕາມໜັງສືສະເໜີຂອງກົມລ້ຽງສັດ ແລະການປະມົງ ເລກທີ 0045/ກລປ, ລົງວັນທີ 11 ເມສາ 2012.

**ລັດຖະມົນຕີວ່າການກະຊວງກະສິກຳ ແລະປ່າໄມ້ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1. ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະມາດຕະການ ໃນການຈັດຕັ້ງປະຕິບັດກ່ຽວກັບການຂຶ້ນທະບຽນພິມສັດຢູ່ ສປປ ລາວ ເພື່ອເກັບກຳສະຖິຕິສັດລ້ຽງ ໃຫ້ມີຄວາມຊັດເຈນ, ສ້າງເງື່ອນໄຂໃຫ້ແກ່ການຄຸ້ມຄອງຝູງສັດ ແລະການດຸ່ນດ່ຽງຝູງສັດ ແນໃສ່ປົກປ້ອງສິດຜົນປະໂຫຍດຂອງຜູ້ລ້ຽງສັດ ແລະອຳນວຍຄວາມສະດວກໃຫ້ແກ່ການຕິດຕາມ, ກວດກາການມອບໂອນກຳມະສິດ, ການຊື້-ຂາຍ, ແລກປ່ຽນ ຕະຫຼອດຮອດການເຄື່ອນຍ້າຍສັດພາຍໃນປະເທດ ແລະສົ່ງອອກໄປຕ່າງປະເທດ ໃຫ້ຖືກຕ້ອງຕາມລະບຽບກົດໝາຍ.

### ມາດຕາ 2. ການຂຶ້ນທະບຽນພິມສັດ

ການຂຶ້ນທະບຽນພິມສັດ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ທີ 2 ຂອງມາດຕາ 4 ຂອງກົດໝາຍວ່າດ້ວຍການລ້ຽງສັດ ແລະການສັດຕະວະແພດ ແມ່ນການເກັບກຳປະຫວັດ ແລະຂໍ້ມູນຂອງສັດລ້ຽງ ເຊັ່ນ: ປະເພດ, ຊື່, ອາຍຸ, ເພດ, ສີ, ພິມເລກລະຫັດປະຈຳຕົວສັດ, ສາຍພັນ, ຕຳນິຮູບປະພັນ, ຈຸດພິເສດຂອງສັດ ແລະທັງເປັນການຢັ້ງຢືນກຳມະສິດຂອງເຈົ້າຂອງສັດອີກດ້ວຍ.

ມາດຕາ 3. **ການອະທິບາຍຄໍາສັບ**

ຄໍາສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ໃບທະບຽນພິມສັດ** ໝາຍເຖິງ ເອກະສານທາງການທີ່ໃຊ້ເພື່ອຢັ້ງຢືນຄວາມຖືກຕ້ອງຂອງສັດລ້ຽງ ມອບໃຫ້ແກ່ເຈົ້າຂອງສັດ ເພື່ອຄຸ້ມຄອງສັດລ້ຽງ ແລະປົກປ້ອງສິດຜົນປະໂຫຍດຂອງເຈົ້າຂອງສັດໃນ ສປປ ລາວ ຊຶ່ງອອກໃຫ້ໂດຍຫ້ອງການກະສິກໍາ ແລະປ່າໄມ້ປະຈໍາເມືອງ, ເທດສະບານ;
2. **ແນວພັນສັດ** ໝາຍເຖິງ ສັດທີ່ຖືກຄັດເລືອກໄວ້ເພື່ອເປັນພໍ່ແມ່ພັນ, ປັບປຸງພັນ ແລະຂະຫຍາຍພັນ ຊຶ່ງອົງການຄຸ້ມຄອງການຂຶ້ນທະບຽນພິມສັດຂັ້ນສູນກາງ ເປັນຜູ້ຄຸ້ມຄອງສັດດັ່ງກ່າວ;
3. **ເຄື່ອງໝາຍສັດ** ໝາຍເຖິງ ເຄື່ອງໝາຍ ຫຼືກາຈໍ້ທີ່ເປັນລັກສະນະສະເພາະ ຕາມການກໍານົດຂອງກົມລ້ຽງສັດ ແລະການປະມົງ ຊຶ່ງປະກອບດ້ວຍກາຕິດຫູ, ການນໍາໃຊ້ສີແຕ້ມທີ່ໂຕຂອງສັດ ຫຼືການໃຊ້ເຫຼັກເຜົາໄຟດາດລົງທີ່ໂຕຂອງສັດ ຫຼືວິທີການອື່ນ;
4. **ກົດໝາຍວ່າດ້ວຍການລ້ຽງສັດ ແລະການສັດຕະວະແພດ** ໝາຍເຖິງກົດໝາຍວ່າດ້ວຍການລ້ຽງສັດ ແລະການສັດຕະວະແພດ ເລກທີ 03/ສພຊ, ລົງວັນທີ 25 ກໍລະກົດ 2008.

## ໝວດທີ 2
## ຫຼັກການຂຶ້ນທະບຽນພິມສັດ

ມາດຕາ 4. **ຫຼັກການຂຶ້ນທະບຽນພິມສັດ**

ການຂຶ້ນທະບຽນພິມສັດ ຕ້ອງຮັບປະກັນຫຼັກການພື້ນຖານ ດັ່ງນີ້:

1. ສັດລ້ຽງທຸກໂຕທີ່ກໍານົດໄວ້ໃນມາດຕາ 5 ຂອງຂໍ້ຕົກລົງສະບັບນີ້ ຕ້ອງນໍາໄປຂຶ້ນທະບຽນພິມສັດ ນໍາອົງການຄຸ້ມຄອງການຂຶ້ນທະບຽນພິມສັດ ຢ່າງລວມສູນ ເພື່ອຮັບປະກັນການສ້າງ ແລະພັດທະນາຖານຂໍ້ມູນກ່ຽວກັບສັດລ້ຽງຢ່າງເປັນລະບົບ;
2. ສັດລ້ຽງທຸກໂຕທີ່ນໍາມາຂຶ້ນທະບຽນ ຕ້ອງມີໃບຮັບຮອງຢັ້ງຢືນ ຈາກນາຍບ້ານ ຫຼືສັດຕະວະແພດບ້ານ ເພື່ອແຈ້ງໃຫ້ທີມງານວິຊາການຂຶ້ນທະບຽນພິມສັດ ຊາບ ແລະບັນທຶກເປັນຂໍ້ມູນເກັບຮັກສາໄວ້ຢູ່ຫ້ອງການກະສິກໍາ ແລະປ່າໄມ້ປະຈໍາເມືອງ, ເທດສະບານ ແລະຂະແໜງການລ້ຽງສັດ ແລະການປະມົງປະຈໍາແຂວງ, ນະຄອນ ທີ່ສັດຢູ່;
3. ການຂຶ້ນທະບຽນພິມສັດ ຕ້ອງລະບຸຂໍ້ມູນໃຫ້ລະອຽດ ແລະຈະແຈ້ງ ເຊັ່ນ: ເວລາ, ສະຖານທີ່ຂຶ້ນທະບຽນ, ພະນັກງານຜູ້ຮັບຜິດຊອບ ແລະຂໍ້ມູນອື່ນໆ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 2 ຂອງຂໍ້ຕົກລົງສະບັບນີ້.

ມາດຕາ 5. **ສັດທີ່ຕ້ອງຂຶ້ນທະບຽນ**

ສັດລ້ຽງທີ່ຕ້ອງຂຶ້ນທະບຽນ ມີ ດັ່ງນີ້:

1. ງົວ, ຄວາຍ, ມ້າ, ລໍ, ລາ ທີ່ມີອາຍຸແຕ່ 1 ປີ ຂຶ້ນໄປ;
2. ໝູ, ແກະ, ແບ້ ທີ່ມີອາຍຸແຕ່ 6 ເດືອນຂຶ້ນໄປ;

3. ໝາ, ແມວ ແລະສັດປີກພໍ່ແມ່ພັນ ທີ່ມີອາຍຸແຕ່ 3 ເດືອນຂຶ້ນໄປ;

4. ຊ້າງລ້ຽງ ແລະຊ້າງປ່າທີ່ຄົນນຳມາລ້ຽງ ທີ່ມີອາຍຸແຕ່ 3 ປີຂຶ້ນໄປ.

ສັດລ້ຽງທີ່ນຳມາຂຶ້ນທະບຽນນັ້ນ ຕ້ອງຮູ້ຈຸດພິເສດ ແລະຂໍ້ມູນຕ່າງໆກ່ຽວກັບສັດ ໂດຍສະເພາະແມ່ນແນວພັນ, ຊະນິດ, ສາຍພັນ, ອາຍຸ, ສີ ແລະຈຸດຕຳໜິພິເສດຕ່າງໆ ທີ່ມີກັບສັດໂຕນັ້ນ.

## ໝວດທີ 3
## ລະຫັດ ແລະການໝາຍເລກປະຈຳໂຕສັດ

**ມາດຕາ 6. ລະຫັດປະຈຳໂຕສັດ**

ລະຫັດປະຈຳໂຕສັດ ຕ້ອງກຳນົດຕາມແຕ່ລະ ລະດັບ ແລະເຂດທ້ອງຖິ່ນ ດັ່ງນີ້:

1. **ລະຫັດທະບຽນພິມສັດລະດັບແຂວງ, ນະຄອນ** ປະກອບມີ 2 ໂຕເລກໝາຍ ຄື: 01 ນະຄອນຫຼວງວຽງຈັນ, 02 ຜົ້ງສາລີ, 03 ຫຼວງນ້ຳທາ, 04 ອຸດົມໄຊ, 05 ບໍ່ແກ້ວ, 06 ຫຼວງພະບາງ, 07 ຫົວພັນ, 08 ໄຊຍະບູລີ, 09 ຊຽງຂວາງ, 10 ວຽງຈັນ, 11 ບໍລິຄຳໄຊ, 12 ຄຳມ່ວນ, 13 ສະຫວັນນະເຂດ, 14 ສາລະວັນ, 15 ເຊກອງ, 16 ຈຳປາສັກ ແລະ 17 ອັດຕະປື;

2. **ລະຫັດທະບຽນພິມສັດລະດັບເມືອງ, ເທດສະບານ** ປະກອບມີ 2 ໂຕເລກໝາຍ ໂດຍໃສ່ຖັດຈາກລະຫັດທະບຽນພິມສັດຂອງແຂວງ, ນະຄອນ ດັ່ງນີ້:

   1). **ນະຄອນຫຼວງວຽງຈັນ:** 0101 ເມືອງຈັນທະບູລີ, 0102 ສີໂຄດຕະບອງ, 0103 ໄຊເສດຖາ, 0104 ສີສັດຕະນາກ, 0105 ນາຊາຍທອງ, 0106 ໄຊທານີ, 0107 ຫາດຊາຍຟອງ, 0108 ສັງທອງ ແລະ 0109 ເມືອງປາກງື່ມ;

   2). **ແຂວງຜົ້ງສາລີ:** 0201 ເມືອງຜົ້ງສາລີ, 0202 ໃໝ່, 0203 ຂົວ, 0204 ສຳພັນ, 0205 ບູນເໜືອ, 0206 ຍອດອູ ແລະ 0207 ເມືອງບູນໃຕ້;

   3). **ແຂວງຫຼວງນ້ຳທາ:** 0301 ເມືອງນ້ຳທາ, 0302 ສິງ, 0303 ລອງ, 0304 ວຽງພູຄາ ແລະ 0305 ເມືອງນາແລ;

   4). **ແຂວງອຸດົມໄຊ:** 0401 ເມືອງໄຊ, 0402 ຫຼາ, 0403 ນາໝໍ້, 0404 ງາ, 0405 ແບ່ງ, 0406 ຮຸນ ແລະ 0407 ເມືອງປາກແບ່ງ;

   5). **ແຂວງບໍ່ແກ້ວ:** 0501 ເມືອງຫ້ວຍຊາຍ, 0502 ຕົ້ນເຜີ້ງ, 0503 ເມິງ, 0504 ຜາອຸດົມ, 0505 ປາກທາ ແລະ 0506 ເຂດພິເສດ;

   6). **ແຂວງຫຼວງພະບາງ:** 0601 ເມືອງຫຼວງພະບາງ, 0602 ຊຽງເງິນ, 0603 ນ່ານ, 0604 ປາກອູ, 0605 ນ້ຳບາກ, 0606 ງອຍ, 0607 ປາກແຊງ, 0608 ໂພນໄຊ, 0609 ຈອມເພັດ, 0610 ວຽງຄຳ , 0611 ພູຄູນ ແລະ 0612 ເມືອງໂພນທອງ;

   7). **ແຂວງຫົວພັນ:** 0701 ເມືອງຊຳເໜືອ, 0702 ຊຽງຄໍ້, 0703 ວຽງທອງ, 0704 ວຽງໄຊ, 0705 ຫົວເມືອງ, 0705 ຊຳໃຕ້, 0707 ສົບເບົາ ແລະ 0708 ເມືອງແອດ;

8). **ແຂວງໄຊຍະບູລີ:** 0801 ເມືອງໄຊຍະບູລີ, 0802 ຄອບ, 0803 ຫົງສາ, 0804 ເງິນ, 0805 ຊຽງຮ່ອນ, 0806 ພຽງ, 0807 ປາກລາຍ, 0808 ແກ່ນທ້າວ, 0809 ບໍ່ແຕນ, 0810 ທົ່ງມີໄຊ ແລະ 0811 ເມືອງໄຊສະຖານ;

9). **ແຂວງຊຽງຂວາງ:** 0901 ເມືອງແປກ, 0902 ຄຳ, 0903 ໜອງແຮດ, 0904 ຄູນ, 0905 ໝອກ, 0906 ພູກູດ, 0907 ຜາໄຊ ແລະ 0908 ເມືອງທ່າໂທມ;

10). **ແຂວງວຽງຈັນ:** 1001 ເມືອງໂພນໂຮງ, 1002 ທຸລະຄົມ, 1003 ແກ້ວອຸດົມ, 1004 ກາສີ, 005 ວັງວຽງ, 1006 ເຟືອງ, 1007 ຊະນະຄາມ, 1008 ແມດ, 1009 ວຽງຄຳ, 1010 ຫີນເຫີບ, 1011 ຮົ່ມ, 1012 ໄຊສົມບູນ ແລະ 1013 ເມືອງໝື່ນ;

11). **ແຂວງບໍລິຄຳໄຊ:** 1101 ເມືອງປາກຊັນ, 1102 ທ່າພະບາດ, 1103 ປາກກະດິງ, 1104 ບໍລິຄັນ, 1105 ຄຳເກີດ, 1106 ວຽງທອງ ແລະ 1107 ໄຊຈຳພອນ;

12). **ແຂວງຄຳມ່ວນ:** 1201 ເມືອງທ່າແຂກ, 1202 ມະຫາໄຊ, 1203 ໜອງບົກ, 1204 ຫີນບູນ, 1205 ຍົມມະລາດ, 1206 ບົວລະພາ, 1207 ນາກາຍ, 1208 ເຊບັ້ງໄຟ ແລະ 1209 ເມືອງໄຊບົວທອງ;

13). **ແຂວງສະຫວັນນະເຂດ:** 1301 ເມືອງໄກສອນພົມວິຫານ, 1302 ອຸທຸມພອນ, 1303 ອາດສະພັງທອງ, 1304 ພີນ, 1305 ເຊໂປນ, 1306 ນອງ, 1307 ທ່າປາງທອງ, 1308 ສອງຄອນ, 1309 ຈຳພອນ, 1310 ຊົນບູລີ, 1311 ໄຊບູລີ, 1312 ວິລະບູລີ, 1313 ອາດສະພອນ, 1314 ໄຊພູທອງ ແລະ 1315 ເມືອງທ່າພະລານໄຊ;

14). **ແຂວງສາລະວັນ:** 1401 ເມືອງສາລະວັນ, 1402 ຕາໂອ້ຍ, 1403 ຕຸ້ມລານ, 1404 ລະຄອນເພັງ, 1405 ວາປີ, 1406 ຄົງເຊໂດນ, 1407 ເລົ່າງາມ ແລະ 1408 ເມືອງສະມ້ວຍ;

15). **ແຂວງເຊກອງ:** 1501 ເມືອງລະມາມ, 1502 ກະລຶມ 1503 ດັກຈຶງ ແລະ 1504 ເມືອງທ່າແຕງ;

16). **ແຂວງຈຳປາສັກ:** 1601 ເມືອງປາກເຊ, 1602 ຊະນະສົມບູນ, 1603 ບາຈຽງຈະເລີນສຸກ, 1604 ປາກຊ່ອງ, 1605 ປະທຸມພອນ, 1606 ໂພນທອງ, 1607 ຈຳປາສັກ, 1608 ສຸຂຸມມາ, 1609 ມຸນລະປະໂມກ ແລະ 1610 ເມືອງໂຂງ;

17). **ແຂວງອັດຕະປື:** 1701 ເມືອງໄຊເສດຖາ, 1702 ສາມັກຄີໄຊ, 1703 ສະໜາມໄຊ, 1704 ຊານໄຊ ແລະ 1705 ເມືອງພູວົງ.

3. **ລະຫັດທະບຽນພົມສັດລະດັບບ້ານ** ປະກອບມີ 2 ໂຕເລກໝາຍ ໂດຍໃສ່ຖັດຈາກລະຫັດທະບຽນພົມສັດຂອງເມືອງ, ເທດສະບານຕົນ ໂດຍແມ່ນຫ້ອງການກະສິກຳ ແລະປ່າໄມ້ປະຈຳເມືອງ, ເທດສະບານ ເປັນຜູ້ລຽງລຳດັບບ້ານທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ.

ການປ່ຽນແປງລະຫັດທະບຽນພົມສັດ ບໍ່ວ່າໃນກໍລະນີໃດກໍຕາມ ຕ້ອງນຳສະເໜີຂໍອະນຸມັດຈາກກົມລ້ຽງສັດ ແລະການປະມົງ ເພື່ອຮັບປະກັນການລວມສູນດ້ານຂໍ້ມູນສັດລ້ຽງ ໃນຂອບເຂດທົ່ວປະເທດ.

**ມາດຕາ 7. ການໝາຍເລກປະຈຳໂຕສັດ**

ການໝາຍເລກປະຈຳໂຕສັດ ແມ່ນອີງຕາມລັກສະນະຈຸດພິເສດຂອງແຕ່ລະປະເພດສັດ ແລະ ເງື່ອນໄຂຄວາມສະດວກ ຂອງແຕ່ລະທ້ອງຖິ່ນ ແຕ່ຕ້ອງສອດຄ່ອງຕາມຫຼັກວິຊາການ ດັ່ງນີ້:

1. ໂຕເລກບົ່ງບອກທີ່ຢູ່ເດີມຂອງສັດ ໂດຍຖືເອົາເລກໝາຍລະຫັດຂອງແຂວງ ຫຼືນະຄອນ, ເມືອງ ຫຼືເທດສະບານ ແລະລະຫັດທະບຽນສັດຂອງບ້ານ ລວມທັງເລກໝາຍປະຈຳໂຕສັດທີ່ທາງການກຳນົດຂຶ້ນ;
2. ສຳລັບສູນ ແລະສະຖານີລ້ຽງສັດຂອງລັດ ຫຼືບໍລິສັດວິສາຫະກິດ, ເອກະຊົນ ແລະບຸກຄົນທີ່ລ້ຽງສັດແບບເປັນຟາມ ສາມາດນຳໃຊ້ລະຫັດ ທີ່ກຳນົດຂຶ້ນເອງ ໂດຍຜ່ານການເຫັນດີຈາກກົມລ້ຽງສັດ ແລະການປະມົງ ຫຼືຂະແໜງລ້ຽງສັດ ແລະການປະມົງປະຈຳແຂວງ, ນະຄອນ ທີ່ສັດຢູ່ ຊຶ່ງເລກໝາຍລະຫັດດັ່ງກ່າວ ບໍ່ໃຫ້ຂັດກັບເລກໝາຍລະຫັດສັດ ຂອງປະຊາຊົນທົ່ວໄປ.

**ມາດຕາ 8. ຂັ້ນຕອນ ແລະວິທີການຂຶ້ນທະບຽນພິມສັດ**

ມອບໃຫ້ກົມລ້ຽງສັດ ແລະການປະມົງ ອອກຄຳແນະນຳເຕັກນິກວິຊາການກ່ຽວກັບຂັ້ນຕອນ ແລະວິທີການຂຶ້ນທະບຽນພິມສັດແຕ່ລະປະເພດ ລວມທັງອຸປະກອນ, ເຄື່ອງມື ແລະວິທີການຈົດກ່າຍໃສ່ໃບທະບຽນພິມສັດ ໃຫ້ເປັນອັນລະອຽດ ເພື່ອພ້ອມກັນຈັດຕັ້ງປະຕິບັດໃນຂອບເຂດທົ່ວປະເທດ.

## ໝວດທີ 4
## ອົງການຄຸ້ມຄອງການຂຶ້ນທະບຽນພິມສັດ

**ມາດຕາ 9. ອົງການຄຸ້ມຄອງການຂຶ້ນທະບຽນພິມສັດ**

ກະຊວງກະສິກຳ ແລະປ່າໄມ້ ຄຸ້ມຄອງວຽກງານການຂຶ້ນທະບຽນພິມສັດ ຢ່າງລວມສູນ ແລະເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກົມລ້ຽງສັດ ແລະການປະມົງ ເປັນເຈົ້າການປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ແລະບັນດາພາກສ່ວນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານການຂຶ້ນທະບຽນພິມສັດ ປະກອບດ້ວຍ:

1. ກົມລ້ຽງສັດ ແລະການປະມົງ;
2. ຂະແໜງລ້ຽງສັດ ແລະການປະມົງປະຈຳແຂວງ, ນະຄອນ;
3. ຫ້ອງການກະສິກຳ ແລະປ່າໄມ້ປະຈຳເມືອງ, ເທດສະບານ;
4. ທີມງານວິຊາການຂຶ້ນທະບຽນພິມສັດ.

**ມາດຕາ 10. ສິດ ແລະໜ້າທີ່ຂອງກົມລ້ຽງສັດ ແລະການປະມົງ**

ໃນການຄຸ້ມຄອງວຽກງານການຂຶ້ນທະບຽນພິມສັດ ກົມລ້ຽງສັດ ແລະການປະມົງ ມີສິດ ແລະໜ້າທີ່ ພື້ນຖານ ດັ່ງນີ້:

1. ເປັນເສນາທິການໃຫ້ແກ່ກະຊວງກະສິກຳ ແລະປ່າໄມ້ ໃນການຄຸ້ມຄອງວຽກງານການຂຶ້ນທະບຽນພິມສັດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການລ້ຽງສັດ ແລະການສັດ

ຕະວະແພດ;

2. ສ້າງກຳນົດໝາຍມາດຕະຖານເຕັກນິກ, ສ້າງບົດແນະນຳ ແລະແຈ້ງການຕ່າງໆກ່ຽວກັບວຽກງານການຂຶ້ນທະບຽນພິມສັດ;
3. ເປັນເຈົ້າການປະສານງານ ແລະຕອບສະໜອງອຸປະກອນ ແລະເຄື່ອງມືທີ່ຈຳເປັນໃນການຂຶ້ນທະບຽນພິມສັດ ໃຫ້ບັນດາແຂວງ, ນະຄອນ ບົນພື້ນຖານການສະເໜີ ຂອງແຂວງ, ນະຄອນ ທີ່ກ່ຽວຂ້ອງ ແລະຕາມຄວາມສາມາດຕົວຈິງທາງດ້ານງົບປະມານ;
4. ພັດທະນາກົນໄກໃນການຂຶ້ນທະບຽນພິມສັດ ເພື່ອເປັນຖານຂໍ້ມູນສັດລ້ຽງຂັ້ນສູນກາງ;
5. ສະຫຼຸບລາຍງານກ່ຽວກັບການຄຸ້ມຄອງການຂຶ້ນທະບຽນພິມສັດ ໃນຂອບເຂດທົ່ວປະເທດ ໃຫ້ກະຊວງກະສິກຳ ແລະປ່າໄມ້ຊາບເປັນປົກກະຕິ;
6. ປະຕິບັດສິດ ແລະໜ້າທີ່ອື່ນ ທີ່ກົດໝາຍກຳນົດ ແລະຕາມການມອບໝາຍຂອງກະຊວງກະສິກຳ ແລະປ່າໄມ້.

**ມາດຕາ 11. ສິດ ແລະໜ້າທີ່ຂອງຂະແໜງລ້ຽງສັດ ແລະການປະມົງປະຈຳແຂວງ, ນະຄອນ**

ໃນການຄຸ້ມຄອງວຽກງານການຂຶ້ນທະບຽນພິມສັດ ຂະແໜງລ້ຽງສັດ ແລະການປະມົງປະຈຳແຂວງ, ນະຄອນ ມີສິດ ແລະໜ້າທີ່ ດັ່ງນີ້:

1. ເປັນເສນາທິການໃຫ້ແກ່ກົມລ້ຽງສັດ ແລະການປະມົງ ແລະພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ, ນະຄອນ ໃນການຄຸ້ມຄອງວຽກງານຂຶ້ນທະບຽນພິມສັດໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໂດຍສະເພາະການເກັບກຳສະຖິຕິ ແລະສະຫຼຸບລາຍງານເປັນປົກກະຕິ;
2. ລົງສົມທົບກັບໜ່ວຍງານລ້ຽງສັດ ແລະການປະມົງເມືອງ, ເທດສະບານ ເພື່ອສ້າງຕັ້ງຄະນະຮັບຜິດຊອບ ແລະທີມງານວິຊາການຂຶ້ນທະບຽນພິມສັດຂັ້ນເມືອງ;
3. ຂຶ້ນແຜນງົບປະມານໃຊ້ຈ່າຍປະຈຳປີ ສຳລັບການເຄື່ອນໄຫວວຽກງານຂຶ້ນທະບຽນພິມສັດ ນຳແຂວງຂອງຕົນ; ອາດຈະສ້າງເປັນກອງທຶນຂຶ້ນທະບຽນພິມສັດຂອງເມືອງ ໂດຍພາຍໃຕ້ການຊີ້ນຳຂອງຄະນະພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ, ນະຄອນ ແລະຫົວໜ້າຂະແໜງລ້ຽງສັດ ແລະການປະມົງປະຈຳແຂວງ, ນະຄອນ;
4. ຄົ້ນຄວ້າ ແລະພັດທະນາລະບົບກົນໄກການຂຶ້ນທະບຽນພິມສັດ ເພື່ອນຳສະເໜີກົມລ້ຽງສັດ ແລະການປະມົງ ແລະພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ, ນະຄອນ ພິຈາລະນາຮັບຮອງເອົາ ແລະສ້າງຖານຂໍ້ມູນສັດລ້ຽງພາຍໃນແຂວງ, ນະຄອນ ຂອງຕົນ;
5. ປະຕິບັດສິດ ແລະໜ້າທີ່ອື່ນໆຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການລ້ຽງສັດ ແລະການສັດຕະວະແພດ.

**ມາດຕາ 12. ສິດ ແລະໜ້າທີ່ ຂອງໜ່ວຍງານລ້ຽງສັດ ແລະການປະມົງປະຈຳເມືອງ, ເທດສະບານ**

ໃນການຄຸ້ມຄອງວຽກງານການຂຶ້ນທະບຽນພິມສັດ ໜ່ວຍງານລ້ຽງສັດ ແລະການປະມົງປະຈຳເມືອງ, ເທດສະບານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເປັນເສນາທິການໃຫ້ແກ່ຂະແໜງລ້ຽງສັດ ແລະການປະມົງປະຈຳແຂວງ, ນະຄອນ ແລະ ❦

ຫ້ອງການກະສິກຳ ແລະປ່າໄມ້ປະຈຳເມືອງ, ເທດສະບານ ໃນການຄຸ້ມຄອງວຽກງານຂຶ້ນທະບຽນພິມສັດໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໂດຍສະເພາະການເກັບກຳສະຖິຕິ ແລະສະຫຼຸບລາຍງານເປັນປົກກະຕິ;

2. ລົງສົມທົບກັບສັດຕະວະແພດບ້ານ ເພື່ອແຕ່ງຕັ້ງທີມງານວິຊາການຂຶ້ນທະບຽນພິມ;
3. ຂຶ້ນແຜນງົບປະມານໃຊ້ຈ່າຍປະຈຳປີ ນຳຫ້ອງການກະສິກຳ ແລະປ່າໄມ້ປະຈຳເມືອງ, ເທດສະບານ ເພື່ອຮັບໃຊ້ວຽກງານຂຶ້ນທະບຽນພິມສັດນຳເມືອງຂອງຕົນ. ອາດຈະສ້າງເປັນກອງທຶນຂຶ້ນທະບຽນພິມສັດຂອງເມືອງ ໂດຍພາຍໃຕ້ການຊີ້ນຳຂອງຂະແໜງລ້ຽງສັດ ແລະການປະມົງປະຈຳແຂວງ, ນະຄອນ ແລະຫ້ອງການກະສິກຳ ແລະປ່າໄມ້ປະຈຳເມືອງ, ເທດສະບານ;
4. ພັດທະນາກົນໄກໃນການຂຶ້ນທະບຽນພິມສັດ ແລະສ້າງຖານຂໍ້ມູນສັດລ້ຽງຂັ້ນເມືອງ;
5. ປະຕິບັດສິດ ແລະໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການລ້ຽງສັດ ແລະການສັດຕະວະແພດ ແລະຂໍ້ຕົກລົງສະບັບນີ້.

**ມາດຕາ 13. ສິດ ແລະໜ້າທີ່ຂອງທີມງານວິຊາການຂຶ້ນທະບຽນພິມສັດ**

ທີມງານວິຊາການຂຶ້ນທະບຽນພິມສັດ ມີສິດ ແລະໜ້າທີ່ ດັ່ງນີ້:

1. ລົງສົມທົບກັບອົງການປົກຄອງບ້ານ ເພື່ອເກັບກຳສະຖິຕິສັດ ພ້ອມທັງປຸກລະດົມເຜີຍແຜ່ລະບຽບການຕ່າງໆກ່ຽວກັບການຂຶ້ນທະບຽນພິມສັດ ໃຫ້ປະຊາຊົນເຂົ້າໃຈຢ່າງເລິກເຊິ່ງ ແລະໃຫ້ຄວາມຮ່ວມມືເປັນຢ່າງດີ;
2. ເລັ່ງໃສ່ຂຶ້ນທະບຽນພິມສັດ ໃນເຂດທີ່ມີການລ້ຽງສັດແບບເປັນຟາມ, ກຸ່ມລ້ຽງສັດ ແລະເຂດທີ່ມີເງື່ອນໄຂສະດວກກ່ອນ ຫຼັງຈາກນັ້ນຈິ່ງຂະຫຍາຍໄປເຂດອື່ນ;
3. ປະຕິບັດສິດ ແລະໜ້າທີ່ອື່ນຕາມການມອບໝາຍຂອງອົງການຄຸ້ມຄອງວຽກງານການຂຶ້ນທະບຽນພິມສັດ.

**ມາດຕາ 14. ພັນທະຂອງເຈົ້າຂອງສັດລ້ຽງ**

ໃນການຂຶ້ນທະບຽນພິມສັດ ເຈົ້າຂອງສັດລ້ຽງ ມີພັນທະ ດັ່ງນີ້:

1. ອຳນວຍຄວາມສະດວກໃຫ້ທີມງານ ໃນການຂຶ້ນທະບຽນພິມສັດລ້ຽງຂອງຕົນ;
2. ພາຍຫຼັງໄດ້ຂຶ້ນທະບຽນພິມສັດເປັນທີ່ຮຽບຮ້ອຍແລ້ວ ຕ້ອງເກັບມ້ຽນໃບທະບຽນພິມສັດຂອງຕົນໄວ້ເປັນຢ່າງດີບໍ່ ໃຫ້ເປິເປື້ອນ ຫຼືຕົກເຮ່ຍເສຍຫາຍ. ໃນກໍລະນີຕົກເຮ່ຍເສຍຫາຍ ເຈົ້າຂອງສັດ ຕ້ອງສະເໜີນຳນາຍບ້ານ, ໜ່ວຍງານລ້ຽງສັດ ແລະສັດຕະວະແພດບ້ານ ເພື່ອນຳສະເໜີອົງການຮັບຜິດຊອບຂັ້ນເມືອງ ຫຼືຂະແໜງການລ້ຽງສັດ ແລະການປະມົງ ອອກໃຫ້ໃໝ່;
3. ເສຍພັນທະພາສີ, ອາກອນ, ຍຄ່າທຳນຽມ ແລະຄ່າບໍລິການຂຶ້ນທະບຽນພິມສັດ ຕາມທີ່ໄດ້ກຳນົດໄວ້ໃນລັດຖະບັນຍັດຂອງປະທານປະເທດ ວ່າດ້ວຍຄ່າທຳນຽມ ແລະຄ່າບໍລິການ ທີ່ໄດ້ປະກາດໃຊ້ໃນແຕ່ລະໄລຍະ.

## ໝວດທີ 5
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະມາດຕະການຕໍ່ຜູ້ລະເມີດ

**ມາດຕາ 15. ນະໂຍບາຍຕໍ່ຜູ້ທີ່ມີຜົນງານ**

ເຈົ້າຂອງສັດລ້ຽງ, ຟາມ, ກຸ່ມລ້ຽງສັດ ລວມທັງພະນັກງານ ແລະການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້, ໂດຍສະເພາະໄດ້ປະກອບສ່ວນເຂົ້າໃນການຊຸກຍູ້ສົ່ງເສີມ ແລະພັດທະນາວຽກງານການຂຶ້ນທະບຽນພົນສັດ ໃຫ້ມີລະບົບທີ່ທັນສະໄໝ ແລະວ່ອງໄວ ຈະໄດ້ຮັບການ ຍ້ອງຍໍ ແລະປະຕິບັດນະໂຍບາຍຕາມຄວາມເໝາະສົມ.

**ມາດຕາ 16. ມາດຕະການຕໍ່ຜູ້ລະເມີດ**

ເຈົ້າຂອງສັດລ້ຽງ, ຟາມ ແລະກຸ່ມລ້ຽງສັດ ທີ່ໄດ້ລະເມີດ ຂໍ້ຕົກລົງສະບັບນີ້ ຕ້ອງຖືກຕັກເຕືອນ, ສຶກສາອົບຮົມ, ປັບໃໝ ຫຼືດຳເນີນຄະດີ ຕາມແຕ່ລະກໍລະນີເບົາ ຫຼື ໜັກ ທີ່ໄດ້ກຳນົດໄວ້ໃນກົດໝາຍວ່າ ດ້ວຍການລ້ຽງສັດ ແລະການສັດຕະວະແພດ.

ສຳລັບພະນັກງານ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ນອກຈາກຕ້ອງຖືກປະຕິບັດມາດຕະການ ຕ່າງໆທີ່ໄດ້ກຳນົດໄວ້ໃນວັກທີໜຶ່ງຂອງມາດຕານີ້ແລ້ວ ຍັງຕ້ອງໄດ້ປະຕິບັດວິໄນຕາມທີ່ໄດ້ກຳນົດໄວ້ໃນ ລະບຽບລັດຖະກອນ ຕື່ມອີກ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 17. ການຈັດຕັ້ງປະຕິບັດ**

ມອບໃຫ້ກົມລ້ຽງສັດ ແລະການປະມົງ ເປັນເຈົ້າການປະສານສົມທົບກັບພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນ, ອົງການປົກຄອງທ້ອງຖິ່ນ ແລະອົງການຈັດຕັ້ງທີ່ກ່ຽວຂ້ອງ ຈັດຕັ້ງປະ ຕິບັດຢ່າງເຂັ້ມງວດ.

**ມາດຕາ 18. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ. ທຸກຂໍ້ກຳນົດ ແລະກົດລະ ບຽບທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ລັດຖະມົນຕີວ່າການກະຊວງກະສິກຳ ແລະປ່າໄມ້

ກະຊວງກະສິກຳແລະປ່າໄມ້

ລັດຖະມົນຕີ

ວິໄລວັນ ພົມເຂ